# ກໍລະນີສຶກສາ ການລົງເຜີຍແຜ່ກົດໝາຍກ່ຽວກັບການຮັກສາສິ່ງແວດລ້ອມ ບ້ານດອນສຳພັນ



ຂຽນໂດຍ: ທີມງານອາສາສະໝັກ ຈາກຄະນະນິຕິສາດ ແລະ ລັດຖະສາດ, ມຊ

1. ທ້າວ ປ່າວຍ່າງ ຈົ່ງຕູ້
2. ທ້າວ ທົ່ງທໍ່ ຊົ່ງລີວ່າງ
3. ນາງ ນາ ລີ
4. ນ ທິດສະດາ ກົ່ງມະຫາໄຊ
5. ນ ຕານ້ອຍ ແສງສີລິຈັນ

ກວດແກ້ໂດຍ: ເພັດດາວັນ ສີປະເສີດ ແລະ ເລນາ ວິໄລເພັດ (ໂຄງການໄລຟ໌)

ເດືອນພະຈິກ 2024

**1. ຄວາມເປັນມາ**

ບ້ານດອນສຳພັນ ເປັນບ້ານໜຶ່ງທີ່ຕັ້ງຢູ່ພາກກາງຂອງປະເທດລາວ ເຊິ່ງເປັນບ້ານທີ່ຂຶ້ນກັບເມືອງລ້ອງຊານ ແຂວງໄຊສົມບູນ. ບ້ານດອນສຳພັນມີຂອບເຂດຕິດກັບຈຸດຕ່າງໆ ດັ່ງນີ້: ທິດເໜືອຕິດກັບພູທົ່ງ ແລະ ບ້ານນາມອນ, ທິດໃຕ້ຕິດກັບບ້ານໂພນສະຫວາດ, ທິດຕາເວັນອອກຕິດກັບບ້ານໂພນສະຫວາດ ແລະ ບ້ານນາມອນ ແລະ ທິດຕາເວັນຕົກຕິດກັບອ່າງນ້ຳງື່ມ 1. ຊາວບ້ານແມ່ນໄດ້ນຳໃຊ້ອ່າງນ້ຳງື່ມເຂົ້າໃນການດຳລົງຊີວິດຂອງຊາວບ້ານ ໂດຍສະເພາະແມ່ນການຫາປາເປັນອາຫານ ແລະ ນຳປາໄປຂາຍເພື່ອເປັນລາຍຮັບແກ່ຄອບຄົວ ນອກຈາກນັ້ນ, ຊາວບ້ານຍັງນຳໃຊ້ອ່າງນ້ຳງື່ມໃນການເດີນເຮືອໄປທຳມາຫາກິນ ແລະ ເດີນເຮືອໄປນະຄອນຫຼວງ, ບ້ານດອນສຳພັນສ່ວນຫຼາຍເປັນຊົນເຜົ່າມົ້ງເປັນຫຼັກ ໂດຍຢູ່ຕິດກັບບັນດາບ້ານອ້ອມຂ້າງທີ່ເປັນຊົນເຜົ່າລາວລຸ່ມ ແລະ ຢູ່ຕິດກັບແຄມອ່າງນ້ຳງື່ມ 1, ສຳລັບອາຊີບຕົ້ນຕໍຂອງປະຊາຊົນແມ່ນອາຊີບເຮັດສວນ ແລະ ອາຊີບສຳຮອງແມ່ນການລ້ຽງສັດ. ບ້ານນີ້ ເປັນບ້ານໜຶ່ງທີ່ນອນຢູ່ໃນເຂດປ່າໄມ້ທີ່ອຸດົມສົມບູນ ເປັນຕົ້ນແມ່ນປະເພດປ່າປ້ອງກັນຕ່າງໆ (ເຂດປ່າປ້ອງກັນແຫຼ່ງນ້ຳທີ່ຢູ່ບໍລິເວນເຂື່ອນໄຟຟ້ານ້ຳງື່ມ 2).




ຮູບ 1: ແຜນທີ່ຂອງບ້ານດອນສຳພັນ

❖ **ຂໍ້ມູນດ້ານປະຊາກອນ ແລະ ປ່າໄມ້:**

| ລ/ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | ປະຊາກອນ | 1758 ຄົນ, ຍິງ 900 ຄົນ |
| 2 | ຫຼັງຄາເຮືອນ | 230 ຫຼັງຄາເຮືອນ |
| 3 | ຄອບຄົວ | 224 ຄອບຄົວ |
| 4 | ອາຊີບຕົ້ນຕໍ | ເຮັດສວນ 60% |
| 5 | ອາຊີບສຳຮອງ | ລ້ຽງສັດ 40% |
| 6 | ຊົນເຜົ່າ | ຊົນເຜົ່າມົ້ງ 100% |
| 7 | ເນື້ອທີ່ທັງໝົດຂອງບ້ານ | 23.0 ກມ² |

**2. ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດຢູ່ຂັ້ນບ້ານຂອງນັກສຶກສາ**

ລວມທັງໝົດ 3 ຄັ້ງຄືດັ່ງນີ້:

**ກ. ການເກັບກຳຂໍ້ມູນໂດຍໃຊ້ແຜນວາດສາຍນ້ຳ**






ຮູບ 2: ແຜນວາດສາຍນ້ຳທີ່ປະຊາຊົນແຕ້ມອອກມາ

ຄັ້ງທຳອິດແມ່ນກິດຈະກຳທີ່ອາສາສະໝັກໂຄງການໄລຟ໌ ລົງໄປຈັດຕັ້ງປະຕິບັດກິດຈະກຳຢູ່ບ້ານດອນສຳພັນ ໂດຍການເກັບກຳຂໍ້ມູນຜ່ານກິດຈະກຳແຜນວາດສາຍນ້ຳ ເພື່ອສຶກສາບັນຫາທີ່ກ່ຽວຂ້ອງກັບເລື່ອງຂອງທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງບ້ານ ຊຶ່ງອາສາສະໝັກກໍໄດ້ເກັບກຳຂໍ້ມູນບັນຫາຈາກການສະເໜີຂອງຊາວບ້ານທີ່ພົບເຫັນພາຍໃນບ້ານເຊັ່ນ: ບັນຫາກ່ຽວກັບປ່າໄມ້, ບັນຫາກ່ຽວກັບຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ບັນຫາການຖິ້ມຂີ້ເຫຍື້ອຊະຊາຍຕາມຈຸດຕ່າງໆຂອງບ້ານ ເຊິ່ງບັນດາຫາດັ່ງກ່າວນັ້ນໄດ້ເຮັດໃຫ້ສະພາບປ່າໄມ້ຂອງບ້ານມີການຫຼຸດລົງ, ຊາວບ້ານຂາດການມີສ່ວນຮ່ວມ ແລະ ເຮັດໃຫ້ມີການຖິ້ມຂີ້ເຫຍື້ອຊະຊາຍ ໂດຍເຮັດໃຫ້ມີຄວາມເປິເປື້ອນ ໂດຍສະເພາະແມ່ນໃນຊ່ວງນ້ຳຂຶ້ນຈະເຮັດໃຫ້ມີຂີ້ເຫຍື້ອຢ່າງຫຼວງຫຼາຍ ແລະ ພາໃຫ້ມີກິ່ນເໝັນ ເຮັດໃຫ້ມີຄວາມສ່ຽງແກ່ການເກີດມີພະຍາດຕ່າງໆ. ສະນັ້ນ, ຊາວບ້ານຈຶ່ງໄດ້ຕົກລົງເຫັນດີເອົາສາມບັນຫາດັ່ງກ່າວນັ້ນເປັນບັນຫາຫຼັກໃນການນຳມາຄົ້ນຄວ້າ ແລະ ລົງໄປເຜີຍແຜ່ໃຫ້ຄວາມຮູ້ທາງດ້ານກົດໝາຍໃຫ້ແກ່ປະຊາຊົນພາຍໃນບ້ານ.

**ຂ. ການປຸກຈິດສຳນຶກເລື່ອງກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ**

ອີງໃສ່ສາມບັນຫາທີ່ເປັນບູລິມະສິດທີ່ຊາວບ້ານໄດ້ກຳນົດຮ່ວມກັນ, ຄູຝຶກໂຄງການໄລຟ໌ໄດ້ມີການຄັດເລືອກມາດຕາກົດໝາຍ ແລະ ພັດທະນາຫຼັກສູດເພື່ອຝຶກອົບຮົມໃຫ້ອາສາສະໝັກ. ຫຼັງຈາກນັ້ນອາສາສະໝັກໄດ້ຝຶກອົບຮົມຕໍ່ໃຫ້ຂັ້ນບ້ານ ໂດຍເນັ້ນໃສ່ ຫົວຂໍ້ທີ່ຕິດພັນກັບບັນຫາທີ່ເກີດຂຶ້ນຢູ່ຂັ້ນບ້ານ 3 ຫົວຂໍ້ຫຼັກຄື: ການອະນຸລັກຊັບພະຍາກອນທຳມະຊາດ, ການຂຶ້ນທະບຽນອອກໃບຕາດິນ, ການແກ້ໄຂບັນຫາກ່ຽວກັບທີ່ດິນ ແລະ ການກຳຈັດສິ່ງເສດເຫຼືອ ໂດຍນຳສະເໜີມາດຕາກົດໝາຍຜ່ານໂປສເຕີຄື: ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ, ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ສາຍວິດີ: ການຂຶ້ນທະບຽນອອກໃບຕາດິນ. ບັນດາຂໍ້ມູນດັ່ງກ່າວນັ້ນ

ເປັນການສ້າງຄວາມເຂົ້າໃຈ ແລະ ປູກຈິດສຳນຶກໃຫ້ປະຊາຊົນໃນການປົກປັກຮັກສາປ່າໄມ້ ແລະ ຈັດການຂີ້ເຫຍື້ອຂອງບ້ານ.

**ຄ. ສືບຕໍ່ປູກຈິດສຳນຶກເລື່ອງກົດໝາຍ ແລະ ສ້າງຂະບວນການອອກແຮງງານລວມ.**

ຫຼັງຈາກກິດຈະກຳຄັ້ງທີ່ສອງສຳເລັດແລ້ວ ຊາວບ້ານຍັງໃຫ້ຄວາມສົນໃຈຕໍ່ກັບກິດຈະກຳຂອງພວກເຮົາຢາກໃຫ້ສືບຕໍ່ເຜີຍແຜ່ກົດໝາຍເພື່ອປູກຈິດສຳນຶກໃຫ້ແກ່ຊາວບ້ານເພີ່ມເຕີມ ໂດຍລົງເລິກໃນບັນຫາຂອງກັບອະນຸລັກປ່າໄມ້ ແລະ ການກຳຈັດສິ່ງເສດເຫຼືອ. ດັ່ງນັ້ນ, ທາງໂຄງການໄລຟ໌ ແລະ ອາສາສະໝັກຂອງພວກເຮົາຈຶ່ງໄດ້ສືບຕໍ່ນຳເອົາກົດໝາຍທີ່ກ່ຽວຂ້ອງກັບການມີສ່ວນຮ່ວມໃນການອະນຸລັກປ່າໄມ້, ຕ້ານ ແລະ ສະກັດກັ້ນໄຟໄໝ້ລາມປ່າ ແລະ ກຳຈັດສິ່ງເສດເຫຼືອ ໄປເຜີຍແຜ່ ແລະ ທຳຄວາມເຂົ້າໃຈໃຫ້ເລິກເຊິ່ງຕື່ມໃຫ້ແກ່ຊາວບ້ານ. ພ້ອມດຽວກັນນັ້ນກໍໄດ້ສ້າງຂະບວນການອອກແຮງງານລວມກັບຊາວບ້ານ ໂດຍແບ່ງອອກເປັນສອງກຸ່ມຄື: ກຸ່ມທີ່ 1 ແມ່ນອອກແຮງງານເກັບຂີ້ເຫຍື້ອລວມພາຍໃນບ້ານ ແລະ ກຸ່ມທີ 2 ແມ່ນໄປຖາງຫຍ້າຕາມແຄມທາງໄລຍະ 2 ກິໂລແມັດໃນຂອບເຂດທີ່ບ້ານຮັບຜິດຊອບ ເຊິ່ງທັງນີ້ກໍເພື່ອເຮັດໃຫ້ຊາວບ້ານມີຄວາມສາມັກຄີ ແລະ ໃຫ້ຄວາມສຳຄັນແກ່ການມີສ່ວນຮ່ວມໃນການຮັກສາຄວາມສະອາດພາຍໃນບ້ານ.

## 3. ການປະເມີນກໍລະນີສຶກສາ ຫຼື ບັນຫາ/ປະເດັນ

ກິດຈະກຳແຜນອາດສາຍນ້ຳເປັນກິດຈະກຳທຳອິດທີ່ອາສາສະໝັກໂຄງການໄລຟ໌ລົງໄປຈັດຕັ້ງປະຕິບັດຢູ່ບ້ານດອນສຳພັນເພື່ອສຶກສາກ່ຽວກັບບັນຫາທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພາຍໃນບ້ານ, ອາສາສະໝັກກໍໄດ້ເກັບກຳຂໍ້ມູນຫຼາຍຢ່າງທີ່ເກີດຂຶ້ນພາຍໃນບ້ານເຊັ່ນ: ບັນຫາກ່ຽວກັບການນຳໃຊ້ປ່າໄມ້, ບັນຫາກ່ຽວກັບທີ່ດິນ ແລະ ບັນຫາທີ່ກ່ຽວຂ້ອງກັບການຖິ້ມຂີ້ເຫຍື້ອຊະຊາຍພາຍໃນບ້ານ. ສະນັ້ນ, ທາງບ້ານ ແລະ ປະຊາຊົນພາຍໃນບ້ານຈຶ່ງໄດ້ຕົກລົງເອົາ 3 ບັນຫາດັ່ງກ່າວນັ້ນຖືເປັນບັນຫາຫຼັກເພື່ອໃຫ້ອາສາສະໝັກ ແລະ ໂຄງການໄລຟ໌ນຳມາຄົ້ນຄວ້າ ແລະ ຫາວິທີແກ້ໄຂຊ່ວຍກັນ.



ບັນຫາກ່ຽວກັບການນຳໃຊ້ປ່າໄມ້: ເມື່ອກ່ອນເນື້ອທີ່ປ່າໄມ້ຂອງບ້ານດອນສຳພັນແມ່ນມີຄວາມອຸດົມສົມບູນ ແຕ່ເນື່ອງຈາກວ່າການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງປະຊາຊົນແມ່ນເພື່ອເປົ້າໝາຍທຳການຜະລິດດ້ານກະສິກຳ ເປັນຕົ້ນແມ່ນ ປູກຢາງພາລາ ແລະ ປູກຫຍ້າລ້ຽງສັດ. ເຊິ່ງລັກສະນະການທຳການຜະລິດດັ່ງກ່າວແມ່ນຍັງບໍ່ທັນມີແຜນຈັດສັນການນຳໃຊ້ທີ່ດິນປ່າໄມ້ຢ່າງລະອຽດ, ມີການຕັດໄມ້ເພື່ອນຳໃຊ້ເຂົ້າໃນການປຸກສ້າງທີ່ຢູ່ອາໄສ ແລະ ສ້າງເປັນເຮືອຂີ່ ຈຶ່ງເຮັດໃຫ້ເນື້ອທີ່ປ່າໄມ້ຫຼຸດລົງ. ພ້ອມດຽວກັນນັ້ນ, ຕົ້ນຢາງພາລາກໍເປັນປະເພດໄມ້ທີ່ມີອາຍຸຍືນ ເມື່ອປູກໄປແລ້ວຈະເຮັດໃຫ້ເນື້ອທີ່ດັ່ງກ່າວບໍ່ສາມາດນຳໃຊ້ໃນເປົ້າໝາຍອື່ນໄດ້ອີກ ແລະ ພົນລະເມືອງຂອງບ້ານກໍມີການເພີ່ມຂຶ້ນໃນແຕ່ລະປີຈຶ່ງມີການຂະຫຍາຍເນື້ອທີ່ທຳການຜະລິດດ້ວຍການຖາງປ່າເຮັດໄຮ່ ແລະ ຂະຫຍາຍພື້ນທີ່ກະສິກຳໄປເຂດປ່າປ້ອງກັນ ຈຶ່ງເຮັດໃຫ້ເກີດມີໄຟໄໝ້ລາມປ່າ ໂດຍກາຍເປັນບັນຫາໜຶ່ງຂອງບ້ານ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟັກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org



ບັນຫາກ່ຽວກັບຂີ້ເຫຍື້ອ: ບັນຫາຂີ້ເຫຍື້ອຂອງບ້ານແມ່ນ ປະເພດຂີ້ເຫຍື້ອທົ່ວໄປ, ເຊິ່ງແຕ່ກ່ອນແມ່ນຍັງບໍ່ມີການນໍາໃຊ້ ປຼາສຕິກຫຼາຍ ເພາະການທໍາມາຫາກິນແມ່ນຍັງອາໄສທໍາມະຊາດເປັນຫຼັກ ແຕ່ມາຮອດປັດຈຸບັນແມ່ນມີການນໍາໃຊ້ປຼາສຕິກຫຼາຍຂຶ້ນ ເຂົ້າໃນການດໍາລົງຊີວິດ ແລະ ເນື່ອງຈາກວ່າລົດເກັບຂີ້ເຫຍື້ອຍັງມາບໍ່ໄດ້ທົ່ວເຖິງ, ປະຊາຊົນເອງມີຄວາມຫຍຸ້ງຍາກ ຍ້ອນໄປທໍາການຜະລິດຢູ່ໄກບໍ່ສາມາດເກັບຂີ້ເຫຍື້ອໃຫ້ລົດມາຮັບໄດ້ ຈຶ່ງນໍາໄປສູ່ການຖິ້ມ, ຈູດຂີ້ເຫຍື້ອຊະຊາຍ ແລະ ຖິ້ມລົງສູ່ແມ່ນໍ້າ.

ບັນຫາກ່ຽວກັບການນໍາໃຊ້ທີ່ດິນ: ການນໍາໃຊ້ທີ່ດິນຂອງບ້ານສ່ວນຫຼາຍແມ່ນນໍາໃຊ້ທີ່ດິນຕາມປະເພນີ ຈຶ່ງເຮັດໃຫ້ການນໍາໃຊ້ທີ່ດິນຍັງມີລັກສະນະຊະຊາຍໃນບາງເຂດ ໂດຍບໍ່ສາມາດກໍານົດຂອບເຂດໄດ້ຢ່າງຈະແຈ້ງ ເຮັດໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນເຊັ່ນ: ການຈັບຈອງທີ່ດິນຕາມໃຈເຮັດໃຫ້ທີ່ດິນບໍ່ພໍແກ່ການນໍາໃຊ້ເກີດມີການຍາດແຍ່ງທີ່ດິນ ແລະ ບໍ່ມີໃບຕາດິນເຮັດໃຫ້ບໍ່ມີຂອບເຂດຈະແຈ້ງ ເກີດມີການຂັດແຍ່ງກັນ (ແຕ່ຕໍ່ກັບບັນຫາດັ່ງກ່າວນັ້ນໃນໄລຍະຜ່ານມານາຍບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງກໍໄດ້ມີການລົງວັດແທກທີ່ດິນບາງເຂດເພື່ອອອກເປັນໃບແຈ້ງທີ່ດິນເພື່ອເສຍພາສີໃຫ້ກັບປະຊາຊົນ ແລະ ແກ້ໄຂບັນຫາຕາມສະພາບຕົວຈິງ).

## 4. ວິທີການຈັດຕັ້ງປະຕິບັດ

ການສ້າງກໍລະນີສຶກສາໃນຄັ້ງນີ້ແມ່ນໄດ້ນໍາໃຊ້ 2 ວິທີການຄື: ທົບທວນເອກະສານ ແລະ ພາກປະຕິບັດຕົວຈິງ.

**ພາກທົບທວນເອກະສານ:** ແມ່ນໄດ້ທົບທວນຄືນບັນດາເອກະສານບົດລາຍງານຈາກການລົງບ້ານໃນຄັ້ງທີ 1 ແລະ ທີ 2 ໄປພ້ອມກັບບັນດາເອກະສານທີ່ກ່ຽວຂ້ອງ ເປັນຕົ້ນແມ່ນບັນດາລະບຽບກົດໝາຍ ແລະ ຂໍ້ມູນສະພາບລວມຂອງບ້ານ, ແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ ເພື່ອນໍາມາເປັນຂໍ້ມູນໃນການສຶກສາ.

**ພາກປະຕິບັດຕົວຈິງ:** ໄດ້ລົງໄປເກັບກໍລະນີສຶກສາ ແລະ ເຄື່ອນໄຫວຢູ່ບ້ານເປົ້າໝາຍໂດຍກົງ ພ້ອມທັງໄປເກັບກໍາຂໍ້ມູນ ແລະ ສໍາພາດຊາວບ້ານ, ອໍານາດການປົກຄອງບ້ານ, ພະນັກງານຈາກຂັ້ນເມືອງທີ່ລົງຕິດຕາມກິດຈະກໍາ, ອະທິບາຍກ່ຽວກັບກິດຈະກໍາທີ່ເຮົາເຮັດ, ເຮັດເວລາໃດ ແລະ ເຮັດແບບໃດ ເຊິ່ງຈຸດປະສົງເພື່ອສັກຖາມຂໍ້ມູນພື້ນຖານ ແລະ ສະພາບລວມຂອງບ້ານເປົ້າໝາຍ, ຟັງຄວາມຄິດເຫັນ-ຂໍ້ສະເໜີຂອງຊາວບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ຮູ້ເຖິງບັນຫາ ແລະ ນໍາເອົາກົດໝາຍໄປເຜີຍແຜ່ໄດ້ຢ່າງຖືກຕ້ອງຕາມຕົວຈິງ.

ນອກຈາກນັ້ນ, ການດໍາເນີນກິດຈະກໍາຢູ່ຂັ້ນບ້ານໃນແຕ່ລະຄັ້ງ ພວກເຮົາຍັງໄດ້ເອົາໃຈໃສ່ຕໍ່ການມີສ່ວນຮ່ວມລະຫວ່າງຍິງ-ຊາຍ  ເຊິ່ງພວກເຮົາໄດ້ນໍາໃຊ້ວິທີການແບ່ງປະຊາຊົນເປັນກຸ່ມຍິງ-ຊາຍ ເພື່ອອໍານວຍຄວາມສະດວກແກ່ການມີສ່ວນຮ່ວມຢ່າງສະເໝີພາບແລ້ວຈຶ່ງເອົາໂພສເຕີໃຫ້ແຕ່ລະກຸ່ມໄດ້ສົນທະນາກັນ ເຊິ່ງເຫັນໄດ້ວ່າພາຍຫຼັງທີ່ແຕ່ລະກຸ່ມສົນທະນາກັນແລ້ວແມ່ນມີຄວາມເຂົ້າໃຈຕໍ່ກັບຫົວຂໍ້ ຫຼື ເນື້ອໃນທີ່ພວກເຮົາເອົາໄປ,  ວິດີໂອທີ່ພວກເຮົານໍາໄປໃຊ້ ຊາວບ້ານກໍໃຫ້ຄວາມສົນໃຈ ເຊິ່ງສະແດງອອກໃນເວລາທີ່ຖາມຕອບ ແລະ ຍົກເອົາບັນຫາຕົວຈິງ ຂຶ້ນມາຖາມ ໂດຍສະເພາະແມ່ນຄັ້ງທີ່ 2 ແລະ ທີ 3 ແມ່ນປະຊາຊົນມີຄວາມສົນໃຈ ແລະ ຍົກເອົາບັນຫາທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງທີ່ດິນ, ການມີສາວນຮ່ວມໃນການອະນຸລັກຊັບພະຍາກອນປ່າໄມ້ ແລະ ຕ້ານໄຟໄໝ້ປ່າ, ການສືບທອດມູນມໍລະດົກ ແລະ ອື່ນໆ ມາແລກປ່ຽນກັນຢ່າງກົງໄປກົງມາ.

| ລຳດັບ | ພາກສ່ວນ | ຈຳນວນຄົນທີ່ຖືກສຳພາດ | | ລວມ |
|---|---|---|---|---|
| | | ຊາຍ | ຍິງ | |
| **1.** | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 1 | 0 | 1 |
| **2.** | ອາຈານຈາກຄະນະນິຕິສາດ ແລະ ລັດຖະສາດ | 1 | 0 | 1 |
| **3.** | ນາຍບ້ານ ບ້ານດອນສຳພັນ | 2 | 0 | 2 |
| **4.** | ປກສ ຮາກຖານບ້ານ | 1 | 0 | 1 |
| **5.** | ຄະນະໜ່ວຍໄກ່ເກ່ຍບ້ານ | 1 | 0 | 1 |
| **6.** | ເຖົ້າແກ່ແນວໂຮມບ້ານ | 1 | 0 | 1 |
| **7.** | ປະຊາຊົນ | 2 | 3 | 5 |
| ***ລວມທັງໝົດ*** | | 9 | 3 | 12 |



**5. ສະເໜີວິທີແກ້ໄຂບັນຫາ**

ຈາກການເກັບກຳຂໍ້ມູນໃນຄັ້ງທຳອິດນັ້ນແລ້ວໄດ້ຖືເອົາ 3 ບັນຫາທີ່ຊາວບ້ານໄດ້ກຳນົດຮ່ວມກັນນັ້ນມາຄົ້ນຄວ້າ ໂດຍແມ່ນຄູຝຶກໂຄງການໄດ້ມີການຄັດເລືອກມາດຕາກົດໝາຍ ແລະ ພັດທະນາຫຼັກສູດເພື່ອຝຶກໃຫ້ອາສາສະໝັກ. ຫຼັງຈາກນັ້ນ, ອາສະໝັກໄດ້ນຳໄປຝຶກອົບຮົມຕໍ່ໃຫ້ແກ່ຂັ້ນບ້ານ ໂດຍເນັ້ນໃສ່ຫົວຂໍ້ທີ່ຕິດພັນກັບບັນຫາທີ່ເກີດຂຶ້ນຢູ່ຂັ້ນບ້ານ 3 ຫົວຂໍ້ຫຼັກຄື: ບັນຫາກ່ຽວກັບການນຳໃຊ້ປ່າໄມ້, ບັນຫາກ່ຽວກັບຂີ້ເຫຍື້ອ ແລະ ບັນຫາກ່ຽວກັບການນຳໃຊ້ທີ່ດິນ. ບັນຫາຫົວຂໍ້ດັ່ງກ່າວນັ້ນພວກເຮົາໄດ້ນຳສະເໜີວິທີແກ້ໄຂຕາມແນວທາງຂອງກົດໝາຍ ໂດຍນຳສະເໜີມາດຕາກົດໝາຍດ້ວຍການບັນຍາຍ, ນຳສະເໜີຜ່ານໂປສເຕີ ແລະ ແລກປ່ຽນເຊິ່ງກັນ ແລະ ກັນ ຕາມບັນດາມາດຕາທີ່ກ່ຽວຂ້ອງ ພ້ອມທັງໄດ້ເປີດວີດີໂອແນະນຳຂັ້ນຕອນການຂຶ້ນທະບຽນອອກໃບຕາດິນ ເພື່ອເປັນການສ້າງຄວາມເຂົ້າໃຈ ແລະ ປຸກຈິດສຳນຶກໃຫ້ກັບປະຊາຊົນພາຍໃນບ້ານ.

- ບັນຫາການນຳໃຊ້ປ່າໄມ້: ພວກເຮົາໄດ້ນຳສະເໜີວິທການແກ້ໄຂບັນຫາດ້ວຍການນຳໃຊ້ກົດໝາຍຄືດັ່ງນີ້:
  - ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019:
    - ມາດຕາ 7 ສິດ ແລະ ພັນທະໃນການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້.
    - ມາດຕາ 39 ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ.
    - ມາດຕາ 52 ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ
    - ມາດຕາ 60 ການສົ່ງເສີມການປູກໄມ້ ແລະ ເຄື່ອງປ່າຂອງດົງ
  - ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ29/ສພຊ, ລົງວັນທີ 18 ທັນວາ 2012:
    - ມາດຕາ 16 ການປົກປັກຮັກສາ ແລະ ພັດທະນາປ່າໄມ້.
- ບັນຫາກ່ຽວກັບຂີ້ເຫຍື້ອ: ພວກເຮົາໄດ້ນຳສະເໜີວິທການແກ້ໄຂບັນຫາດ້ວຍການນຳໃຊ້ກົດໝາຍຄືດັ່ງນີ້:
  - ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ29/ສພຊ, ລົງວັນທີ 18 ທັນວາ 2012:
    - ມາດຕາ 38 ການກຳຈັດສິ່ງເສດເຫຼືອ.
- ບັນຫາກ່ຽວກັບທີ່ດິນ: ພວກເຮົາໄດ້ນຳສະເໜີວິທການແກ້ໄຂບັນຫາດ້ວຍການນຳໃຊ້ກົດໝາຍຄືດັ່ງນີ້:
  - ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019:
    - ມາດຕາ 101 ຂັ້ນຕອນການຂຶ້ນທະບຽນອອກໃບຕາດິນ
    - ມາດຕາ 130 ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ
    - ມາດຕາ 161 ຮູບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ

ພ້ອມກັນນັ້ນ, ພວກເຮົາກໍຍັງໄດ້ສ້າງກິດຈະກຳໃຫ້ຊາວບ້ານໄດ້ລົງມືເຮັດຕົວຈິງ ເຊັ່ນ: ກິດຈະກຳຄວາມສຸກຂອງຖັງຂີ້ເຫຍື້ອ ແລະ ສ້າງຂະບວນການອອກແຮງງານລວມ ເພື່ອແນໃສ່ເຮັດໃຫ້ຊາວບ້ານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການມີສ່ວນຮ່ວມໃນການອະນຸລັກສິ່ງແວດລ້ອມເຊັ່ນ:

- ຫລັງຈາກພວກເຮົາບັນຍາຍກ່ຽວກັບວິທີແຍກຂີ້ເຫຍື້ອແລ້ວ ໄດ້ພາຊາວບ້ານຫລິ້ນກິດຈະກຳຄວາມສຸກຂອງຖັງຂີ້ເຫຍື້ອ ໂດຍການຢາຍເຈ້ຍທີ່ມີຮູບພາບຂີ້ເຫຍື້ອແຕ່ລະປະເພດ ໃຫ້ຊາວບ້ານເລືອກແຍກໃສ່ຖັງຂີ້ເຫຍື້ອ ທີ່ພວກເຮົາໄດ້ກຳນົດໄວ້.

- ອາສາສະໝັກຂອງພວກເຮົາ ແລະ ຊາວບ້ານໄດ້ສ້າງຂະບວນການອອກແຮງງານລວມພາຍໃນບ້ານ ດ້ວຍການເກັບຂີ້ເຫຍື້ອຕາມແຄມອ່າງນ້ຳ, ຕາມເສັ້ນທາງ ແລະ ເຮືອນຊານຊາວບ້ານ.




ຮູບ 3: ການສ້າງຂະບວນການອອກແຮງງານລວມ

ທັງນີ້ກໍແມ່ນເພື່ອເຮັດໃຫ້ຊາວບ້ານໄດ້ເຫັນເຖິງຄວາມສຳຄັນຂອງການອະນຸລັກສິ່ງແວດລ້ອມ ແລະ ການມີສ່ວນຮ່ວຂອງບ້ານ ໂດຍເປັນກິດຈະກຳໜຶ່ງໃນການປູກຈິດສຳນຶກຂອງຊາວບ້ານໃຫ້ມີສ່ວນຮ່ວມໃນການປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ. ເຊິ່ງຈາກການລົງໄປເຮັດກິດຈະກຳໃນຊຸດນີ້ເຫັນວ່າຊາວບ້ານມີຄວາມເຂົ້າໃຈຕໍ່ກັບກິດຈະກຳຂອງພວກເຮົາ, ໃຫ້ຄວາມສົນໃຈ ແລະ ການຮ່ວມມືກັບພວກເຮົາເປັນຢ່າງດີ ໄດ້ມີການຖາມຕອບແລກປ່ຽນຄວາມຄິດເຫັນນຳຊາວບ້ານໃນຂະນະທີ່ອອກແຮງງານ ແລະ ເຫັນວ່າຊາວບ້ານແມ່ນມີຄວາມເຂົ້າໃຈຕໍ່ຫົວຂໍ້ຫຼາຍ. ນອກຈາກນັ້ນ, ນາຍບ້ານໄດ້ກ່າວວ່າ ກິດຈະກຳຂອງພວກເຮົາເຮັດໃຫ້ຊາວບ້ານມ່ວນ ແລະ ໄດ້ຮຽນຮູ້ໄປໃນເວລາດຽວກັນ ເຮັດໃຫ້ຊາວບ້ານເຂົ້າໃຈງ່າຍ ເຊິ່ງຕ່າງຈາກໂຄງການອື່ນໆ ທີ່ໄດ້ມາເຜີຍແຜ່ຜ່ານມາ.

## 6. ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດກິດຈະກຳຂອງອາສາສະໝັກ

ຜ່ານການເຮັດກິດຈະກຳ 3 ຄັ້ງຜ່ານມາ ເຫັນໄດ້ວ່າຊາວບ້ານມີການປ່ຽນແປ່ງຫຼາຍໂດຍສະເພາະແມ່ນ ດ້ານແນວຄິດ ແລະ ການປະຕິບັດຕົວຈິງ ເຊິ່ງຊາວບ້ານໄດ້ນຳໃຊ້ບົດຮຽນທີ່ເຮົາໄດ້ເຜີຍແຜ່ນັ້ນເຂົ້າໃນການດຳລົງຊີວິດຂອງເຂົາເຈົ້າ. ຈາກການສຳພາດອົງການປົກຄອງບ້ານ ເພິ່ນໄດ້ກ່າວວ່າ ຫຼັງຈາກມີການເຜີຍແຜ່ແລ້ວ ຊາວບ້ານແມ່ນຮູ້ຈັກຄວາມສຳຄັນຂອງຊັບພະຍາກອນທຳມະຊາດ, ການອະນຸລັກປ່າໄມ້ ແລະ ມີຄວາມຕື່ນຕົວໃນການ ກຳຈັດຂີ້ເຫຍື້ອ ແລະ ທາງອຳນາດການປົກຄອງບ້ານກໍຈະເພີ່ມທະວີຄວາມຮັບຜິດຊອບຂອງຕົນ ເຊິ່ງຈະມີການສ້າງກົດລະບຽບກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການກຳຈັດຂີ້ເຫຼືຍອພາຍໃນບ້ານ. ນອກຈາກນັ້ນ, ຕອນພວກເຮົາອານາໄມລວມ ຍັງມີເດັກນ້ອຍເວົ້າວ່າຖ້າຮູ້ວ່າຈະໄດ້ເກັບຂີ້ເຫຍື້ອແບບນີ້ ຈະບໍ່ຖິ້ມຖົງຂະໜົມຊະຊາຍ, ມື້ໜ້າຈະຖິ້ມໃສ່ກະຕ່າຂີ້ເຫຍື້ອ ຈຶ່ງບໍ່ໄດ້ເກັບອີກ. ຈາກຄຳເວົ້າເຫຼົ່ານີ້ເຫັນໄດ້ວ່າກິດຈະກຳຂອງພວກເຮົາສາມາດຕອບໂຈດບັນຫາຂອງບ້ານ ແລະ ສາມາດຊ່ວຍທາງບ້ານຕື່ນຕົວຕໍ່ການກະທຳຂອງຕົນ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

➢ ຜົນໄດ້ຮັບຈາກກິດຈະກຳຕາມຄຳສຳພາດ:



"ຕັ້ງແຕ່ມີໂຄງການນີ້ມາ ສັງເກດເຫັນວ່າປະຊາຊົນຮູ້ຈັກອະນຸລັກປ່າໄມ້ ເຊິ່ງແຕ່ກີ້ຕັດຕົ້ນໄມ້ຕົ້ນໜຶ່ງກໍບໍ່ຮູ້ປະຢັດ ແຕ່ຫຼັງຈາກທີ່ມີໂຄງການມານີ້ຈຶ່ງຮູ້ຄຸນຄ່າຂອງໄມ້, ຮູ້ອະນຸລັກຊັບພະຍາກອນນ້ຳ". "ເລື່ອງຂີ້ເຫຍື້ອ ຄືຫຼາຍໆຄັ້ງຜ່ານມາແມ່ນລະດົມແນວໃດປະຊາຊົນກໍບໍ່ມາອອກແຮງງານລວມ ແຕ່ຊຸດນີ້ພວກນ້ອງມານຳພາ ແລະ ສ້າງກິດຈະກຳຮຽນຮູ້ ເຮັດໃຫ້ຊາວບ້ານຮູ້ສຶກຕື່ນຕົວ, ຄືມື້ເຊົ້າອອກແຮງງານນີ້ເຫັນເດັກນ້ອຍຮູ້ຈົ່ມວ່າເປື້ອນປານນີ້ ຖ້າຮູ້ຮັກສາແຕ່ຫົວທີ ເຮົາຈະບໍ່ໄດ້ມາເກັບຄືມື້ນີ້ ແລະ ເຫັນເດັກນ້ອຍສອງສາມຄົນຈົ່ມວ່າຖ້າຮູ້ວ່າຈະໄດ້ເກັບແບບນີ້ ຈະບໍ່ຖິ້ມຖົງເຂົ້າໜົມຊະຊາຍ, ມື້ໜ້າຈະຖິ້ມໃສ່ກະຕ່າຂີ້ເຫຍື້ອ ຈຶ່ງບໍ່ໄດ້ເກັບອີກ". "ດຽວນີ້ບ້ານໄດ້ບົດຮຽນຈາກກິດຈະກຳນີ້ແລ້ວ ຕາມການຕົກລົງແມ່ນຈະສືບຕໍ່ຈັດກິດຈະກຳອອກແຮງງານລວມເດືອນລະເທື່ອ". ຄຳສຳພາດຂອງ ທ່ານ ຢ່າງອີ ຢ່າຫວາລີ ເລຂາພັກບ້ານ ນາຍບ້ານດອນສຳພັນ

"ພາຍຫຼັງທີ່ໂຄງການລົງມາສູ່ບ້ານນີ້ແລ້ວ ປະຊາຊົນໄດ້ຫຼິ້ນກິດຈະກຳ ແລະ ຮຽນຮູ້ກົດໝາຍໄປນຳເຮັດໃຫ້ປະຊາຊົນມີຄວາມສະໜຸກ, ມີຄວາມກະຕືລືລົ້ນໃນການຮຽນຮູ້ ແລະ ມີສ່ວນຮ່ວມໃນການຫຼິ້ນກິດຈະກຳ, ເຊິ່ງພາຍຫຼັງທີ່ມີໂຄງການມາແລ້ວເວົ້າເລື່ອງການຖາງປ່າເຮັດໄຮ່, ການທຳລາຍສິ່ງແວດລ້ອມ ແມ່ນມີອັດຕາຫຼຸດລົງເພາະວ່າປະຊາຊົນໄດ້ໃຫ້ຄວາມຮ່ວມມື, ສາມາດປຸກລະດົມໄດ້ ເຊິ່ງໃນນາມຂ້າພະເຈົ້າເປັນພະນັກງານຮາກຖານປະຈຳບ້ານມີຄວາມຮູ້ສຶກດີ ແລະ ພາກພູມໃຈທີ່ໄດ້ເຮັດໃຫ້ບ້ານມີຄວາມກ້າວໜ້າ, ປະຊາຊົນມີຄວາມເຂົ້າໃຈຫຼາຍ". "ຖ້າຫາກມີຕໍ່ໃນຄັ້ງໜ້າປະຊາຊົນອາດຈະມາເຂົ້າຮ່ວມຫຼາຍກວ່າໃນຄັ້ງນີ້". ຄຳສຳພາດຂອງທ່ານ ຊູລີ ວຽງໄຊລີ ພະນັກງານຮາກຖານປະຈຳບ້ານດອນສຳພັນ.

"ບັນດາຮູບພາບທີ່ທາງໂຄງການໄດ້ນຳສະເໜີ ແມ່ນເປັນສິ່ງທີ່ພວກເຮົາເຂົ້າໃຈຫຼາຍທີ່ສຸດຕໍ່ກັບບັນດາມາດຕາຂອງກົດໝາຍ ເຮັດໃຫ້ພວກເຮົາເຫັນກວ້າງໄກ ແລະ ມີການພັດທະນາຫຼາຍຂຶ້ນ ພ້ອມທັງເຮັດໃຫ້ ພວກເຮົາຮູ້ວ່າຕ້ອງດຸໝັ່ນຂະຫຍັນພຽນຈຶ່ງຈະມີຢູ່ມີກິນ ແລະ ຕ້ອງເປັນຄົນດີ ບໍ່ຍາດຂອງຄົນອື່ນມາເປັນຂອງຕົນ. ພວກເຮົາຍັງຢາກໃຫ້ໂຄງການເອົາຄວາມຮູ້ແນວນີ້ກັບມາສອນພວກເຮົາຕື່ມ ເຖິງຈະເປັນ 10 ເທື່ອກໍຢາກໃຫ້ມາອີກ ເພື່ອໃຫ້ພວກເຮົາຮູ້ວ່າຈະເຮັດແນວໃດໃຫ້ຖືກຕ້ອງຕາມກົດໝາຍ". ຄຳສຳພາດຂອງແມ່ຍິງບ້ານດອນສຳພັນ

## 7. ສະຫຼຸບ\ບົດຮຽນທີ່ຖອດຖອນໄດ້

ການລົງໄປເຮັດກິດຈະກຳຢູ່ຂັ້ນບ້ານໃນຊຸດນີ້ແມ່ນເປັນກິດຈະກຳໜຶ່ງທີ່ເປັນການປູກຈິດສຳນຶກ, ສົ່ງເສີມການຮຽນຮູ້ ແລະ ເຂົ້າເຖິງບັນດາລະບຽບກົດໝາຍທີ່ກ່ຽວຂ້ອງກັບການອະນຸລັກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຊ່ວຍເຮັດໃຫ້ຊາວບ້ານໄດ້ຮັບຮູ້ເຖິງຄວາມສຳຄັນຂອງປະເດັນດັ່ງກ່າວ ແນໃສ່ເຮັດໃຫ້ທຸກຄົນມີສ່ວນຮ່ວມໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ.

- **ບົດຮຽນທີ່ຖອດຖອນໄດ້ລະດັບນັກສຶກສາ:**

ນັກສຶກສາພາຍໃນທີມ ແມ່ນມີຄວາມຮູ້ສຶກພາກພູມໃຈທີ່ໄດ້ມີໂອກາດໃນການນໍາເອົາຄວາມຮູ້ທີ່ໄດ້ຈາກການຮຽນຮູ້ກັບຄືນໄປເຜີຍແຜ່ໃຫ້ກັບປະຊາຊົນທີ່ຢູ່ໃນທ້ອງຖິ່ນຂອງຕົນເອງ ເຊິ່ງເປັນກິດຈະກໍາໜຶ່ງທີ່ມີຄວາມສໍາຄັນຢ່າງຍິ່ງ ແລະ ເປັນສ່ວນໜຶ່ງໃນການຊ່ວຍເຮັດໃຫ້ຊາວບ້ານໄດ້ຮັບຮູ້ຂໍ້ມູນທາງດ້ານກົດໝາຍ ແລະ ກາຍເປັນສ່ວນໜຶ່ງໃນການປູກຈິດສໍານຶກເຮັດໃຫ້ຊາວບ້ານມີຄວາມຕື່ນຕົວ ແລະ ມີສ່ວນຮ່ວມນໍາກັນໃນການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂອງບ້ານ. ນອກຈາກນັ້ນ, ພາຍໃນທີມ ແຕ່ລະຄົນແມ່ນໄດ້ຮຽນຮູ້ໃນພາກປະຕິບັດຕົວຈິງໃນການລົງໄປເຮັດກິດຈະກໍານຄັ້ງນີ້ ເປັນຕົ້ນແມ່ນໄດ້ພັດທະນາທັກສະໃນການເວົ້າ, ການແກ້ໄຂບັນຫາສະເພາະໜ້າ, ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ, ການເຂົ້າຫາປະຊາຊົນ ແລະ ໄດ້ຮຽນຮູ້ທັກສະການເຮັດວຽກຮ່ວມກັນ.

- **ບົດຮຽນທີ່ຖອດຖອນໄດ້ໃນຂັ້ນບ້ານ:**

ຈາກການລົງໄປດໍາເນີນກິດຈະກໍາຢູ່ຂັ້ນບ້ານ ປະຊາຊົນແມ່ນມີຄວາມຮູ້ສຶກພາກພູມໃຈທີ່ນັກສຶກສາລົງມາໃຫ້ຂໍ້ມູນທາງດ້ານກົດໝາຍທີ່ກ່ຽວຂ້ອງກັບການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຢູ່ໃນບ້ານ ເຊິ່ງເປັນກິດຈະກໍາໜຶ່ງທີ່ມີຄວາມໝາຍ ແລະ ຄວາມສໍາຄັນເຮັດໃຫ້ປະຊາຊົນໄດ້ມີຄວາມຕື່ນຕົວໃນການອະນຸລັກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນຫຼັງຈາກເຮັດກິດຈະກໍາແລ້ວປະຊາຊົນໄດ້ຮູ້ເຖິງຄຸນປະໂຫຍດຂອງຊັບພະຍາກອນທໍາມະຊາດ ໃນການມີສ່ວນຮ່ວມປົກປັກຮັກສາທໍາມະຊາດ ແລະ ສິ່ງແວດລ້ອມຂອງບ້ານ ຊຶ່ງຈະເຫັນເຖິງການມີສ່ວນຮ່ວມຂອງປະຊາຊົນທີ່ສະແດງອອກຢູ່ໃນມື້ສ້າງຂະບວນການອອກແຮງງານລວມ ແລະ ເກັບຂີ້ເຫຍື້ອ ພາຍໃນບ້ານເຮັດໃຫ້ກາຍເປັນຂະບວນການຢ່າງຟົດຟື້ນ ແລະ ທັງບ້ານຍັງໄດ້ໃຫ້ຄໍາເຫັນຕື່ມວ່າຈະສືບຕໍ່ນໍາເອົາບົດຮຽນຈາກກິດຈະກໍາໃນຄັ້ງນີ້ໄປນໍາໃຊ້ໃນອະນາຄົດໃຫ້ປະຊາຊົນມີຄວາມສາມັກຄີ ແລະ ມີສ່ວນຮ່ວມນໍາກັນໃນການປົກປັກຮັກສາສິ່ງແວດລ້ອມ.

- **ບົດຮຽນທີ່ຖອດຖອນໄດ້ໃນຂັ້ນເມືອງ:**

ການດໍາເນີນກິດຈະກໍາທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດໃນຄັ້ງນີ້ແມ່ນເປັນກິດຈະກໍາໜຶ່ງທີ່ສົ່ງເສີມການຮຽນຮູ້ທີ່ມີຜົນປະໂຫຍດຫຼາຍແກ່ບ້ານ ເຮັດໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຖິງລະບຽບກົດໝາຍເປັນຕົ້ນແມ່ນຂັ້ນຕອນວິທີການຈັດຕັ້ງ, ການໄດ້ສິດນໍາໃຊ້ທີ່ດິນຕາມປະເພນີ, ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ການມີສ່ວນຮ່ວມໃນການອະນຸລັກຊັບພະຍາກອນທໍາມະຊາດຂອງບ້ານກໍຄືຂອງເມືອງລ້ອງຊານ ເຮັດໃຫ້ປະຊາຊົນມີຄວາມຕື່ນຕົວໃນການປົກປັກຮັກສາສິ່ງແວດລ້ອມ. ເມືອງເອງກໍໄດ້ບົດຮຽນທີ່ດີຈາກການດໍາເນີນກິດຈະກໍາຂອງໄວໜຸ່ມ ເຊິ່ງການດໍາເນີນກິດກໍາແມ່ນເຮັດໄດ້ດີພໍສົມຄວນ, ຖ້າເປັນໄປໄດ້ຢາກສະເໜີໃຫ້ໂຄງການສືບຕໍ່ເຜີຍແຜ່ ແລະ ຂະຫຍາຍໄປຍັງບັນດາບ້ານອ້ອມຂ້າງຕື່ມອີກ. ນອກຈາກນັ້ນ, ພະນັກງານຈາກຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ໄດ້ເວົ້າວ່າ: "ເມືອງເຫັນຄວາມສໍາຄັນຂອງຂອງການສ້າງປ່າປ້ອງກັນ ຍ້ອນວ່າໄດ້ເຫັນວິດີໂອທີ່ອາສາສະໝັກໄດ້ສາຍໃຫ້ເບິ່ງ ແລະ ເພິ່ນຈະໄປນໍາສະເໜີຫ້ອງການ ເພື່ອໃຫ້ຊ່ວຍສະໜັບສະໜູນໃນການສ້າງປ່າປ້ອງກັນຢູ່ບ້ານນີ້".


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org